ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 001 /ສພທ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ 29/01/2019

# ມະຕິ

# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ

# ຄັ້ງທີ 1 ປະຈຳປີ 2019, ວັນທີ 29 /01/2019

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 1 ປະຈໍາປີ 2019 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 9:00 ໂມງ ຂອງວັນທີ 29/01/2019 ທີ່ສໍານັກງານໃຫຍ່ ທຄຕລ ໂດຍ ການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິ ຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງໃນບັນຫາສໍາຄັນຕ່າງໆ ດັ່ງນີ້:**

1. ຮັບຮອງສັດສ່ວນການແບ່ງປັນກໍາໄລຫຼັງອາກອນ ປະຈໍາປີ 2018 ເພື່ອຈ່າຍເງິນປັນຜົນ ແລະ ເຂົ້າຄັງຕ່າງໆ ດັ່ງນີ້:
   - ແບ່ງເຂົ້າຄັງສໍາຮອງຕາມກົດໝາຍ 10%
   - ແບ່ງເຂົ້າຄັງຂະຫຍາຍທຸລະກິດ 30%
   - ແບ່ງເຂົ້າກໍາໄລ-ຂາດທຶນສະສົມ 10%
   - ຈ່າຍເງິນປັນຜົນ 50%

   ສັດສ່ວນການແບ່ງປັນດັ່ງກ່າວ ຈະໄດ້ນໍາສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງໃນຂັ້ນຕໍ່ໄປ.
2. ຮັບຮອງແຜນການຂອງ ທຄຕລ ປະຈໍາປີ 2019 ເຊິ່ງລວມມີ:
   - ແຜນຂະຫຍາຍຕາໜ່າງບໍລິການ ທຄຕລ
   - ແຜນຮັບພະນັກງານ
   - ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ
   - ແຜນຕົວເລກທຸລະກິດ

   ແຜນການປະຈໍາປີ 2019 ດັ່ງກ່າວ ຈະໄດ້ນໍາສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງໃນຂັ້ນຕໍ່ໄປ.
3. ຮັບຮອງບໍ່ໃຫ້ ທຄຕລ ສ້າງຄັງແຮຜົນຕອບແທນພະນັກງານຍ້ອນຫຼັງ, ແຕ່ຈະເລີ່ມສ້າງໄປຕໍ່ໜ້ານັບຈາກ 1/2019 ເປັນຕົ້ນໄປ.
4. ຮັບຮອງ ຮ່າງນະໂຍບາຍຄຸ້ມຄອງຄວາມສ່ຽງສິນເຊື່ອຂອງ ທຄຕລ.
5. ຮັບຮອງ ນະໂຍບາຍເງິນກູ້ SME ຂອງ ທຄຕລ.

6. ຮັບຮອງ ລະບຽບວ່າດ້ວຍການປະຕິບັດນະໂຍບາຍຕໍ່ພະນັກງານ ທຄຕລ (ສະບັບປັບປຸງ ປີ 2019)
7. ຮັບຮອງການເຮັດທຸລະກຳຂົນສົ່ງເງິນສົດຂອງ ທຄຕລ ກັບ ບໍລິສັດ TRAVELEX
8. ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານໃນປີ 2019 ແລະ ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018:
   - ກຳນົດເອົາວັນທີ 26 ເມສາ 2019 ເປັນມື້ຈັດກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2018
9. ຮັບຮອງການຊັບຊ້ອນ ແຕ່ງຕັ້ງພະນັກງານ ທຄຕລ

ກອງປະຊຸມ ໄດ້ປິດລົງໃນເວລາ 12:00 ໂມງຂອງວັນດຽວກັນ

**ປະທານສະພາບໍລິຫານ**

ປອ. ບຸນເຫຼືອ ສິນໄຊວໍຣະວົງ